Botulism

Laotian



# ໂຣຄ໌ "ໂບຕູລີຊຶມ" (ໂຣຄ໌ທີ່ເກີດຈາກການເປັນພິດ)

## ໂຣຄ໌ "ໂບຕູລີຊຶມ" ແມ່ນຫຍັງ?

ໂຣຄ໌ "ໂບຕູລີຊຶມ" ເປັນພະຍາດອັນຕຣາຍຊະນິດນຶ່ງທີ່ອາດທຳໃຫ້ເຖິງແກ່ການເສັຍຊີວິດໄດ້ຊຶ່ງມັນເກີດມາຈາກສານພິດ ຊະນິດນຶ່ງ. ສານພິດນັ້ນເອີ້ນວ່າ "ໂບຕູລີຊຶມ ໂທກຊິນ" ທີ່ມາຈາກ ເຊື້ອໂຣຄ໌ "ແບກທີເຣັຽ" ຊນິດນຶ່ງ. "ໂບຕູລີຊຶມໂທກຊິນ" ນັບວ່າເປັນສານພິດຮ້າຍແຮງທີ່ສຸດທີ່ທາງວິທຍາສາດໄດ້ຄົ້ນພົບ.



*ກ່ອງໃສ່ອາຫານຢູ່ໃນບ້ານປະປົນເຊື້ອໂຣກແບັກທີເຣັຍ*

"ໂບຕູລີຊຶມ" ເຄີຍເຊື່ອຖືກັນວ່າເປັນຢາຊະນິດທີ່ໃຊ້ໃນພາວະສຸດເສິນທາງການແພທ. ມັນຍັງສາມາດທີ່ ຈະທຳຣາຍຄົນໃຫ້ເຖິງແກ່ເສັຍຊີວິດໄດ້ໂດຍການກະຕຸ້ນກ້າມເນື້ອທີ່ ລະບົບ ຫາຍໃຈບໍ່ໃຫ້ທຳງານ. ແຕ່ວ່າໃນ 50 ປີທີ່ຜ່ານມານີ້ ຍ້ອນມີການປິ່ນປົວ ຮັກສາທີ່ດີຂື້ນ, ອັດຕຣາການຕາຍຂອງຄົນທີ່ຕິດພະຍາດນີ້ ຈຶ່ງລຸດຫຼາຍ ຈາກ 50 ເປີເຊັນ ລົງໄປຫາ 8 ເປີເຊັນ.

ຄິດສເລັ່ຽປະມານກາງແລ້ວ ແຕ່ລະປີ ໃນສຫະຣັຖ ຈະມີການຣາຍງານເຣື່ອງພະຍາດນີ້ເຂົ້າມາລະຫວ່າງ 110 ລາຍ.

## ເຊື້ອໂຣຄ໌ "ໂບຕູລີຊຶມ" ຕິດຕໍ່ລະບາດໄດ້ຢ່າງໃດ?

ຕາມທຳມະດາແລ້ວ ຄົນເຮົາຈະຕິດໂຣຄ໌ "ໂບຕູລີຊຶມ" ນີ້ໄດ້ສາມວິທີຕ່າງກັນດັ່ງນີ້:

- ໂດຍກິນອາຫານ ທີ່ມີຢາພິດຕິດມານຳ
- ຈາກພິດຂອງຢາກຳເຣີບຂື້ນ ໃນເມື່ອບາດແຜເກີດອັກເສັບຈາກການຕິດເຊື້ອພະຍາດ
- ໃນເມື່ອທາຣົກ ກິນຫລືດື່ມຂອງບາງຢ່າງ ທີ່ບັນຈຸເຊື້ອ "ແບກທີເຣັຍ" ການປ່ຽນຕົວເປັນເປືອກແຂງ "ແບກທີເຣັຍ" ໃນເມື່ອມັນບໍ່ສາມາດຈະເຕີບໂຕ ຫລື ແຜ່ພັນຕໍ່ໄປໄດ້ອີກ.

ມັນຍັງເປັນທີ່ເຊື່ອກັນວ່າ ຢາພິດ "ໂບຕູລີຊຶມ" ສາມາດເອົາມາໃຊເປັນອາວຸດໄດ້ ຖ້າມີເຈຕະນາເອົາຢາພິດນັ້ນໃສ່ໃນອາຫານ, ຫລືປ່ອຍອອກໄປຕາມອາກາດເພື່ອໃຫ້ຄົນຫາຍໃຈເອົາ.

## ອາການເຈັບເປັນມີຫຍັງແດ່?

ອາການຂອງພະຍາດ "ໂບຕູລີຊຶມ" ຈະຄືກັນໝົດ,ມັນຂື້ນຢູ່ກັບການຕິດຂອງພຍາດນີ້. ອາການຈະມີຄືສາຍຕາຊ້ອນກັນ, ຕາມົວ, ໜັງຕາຕົກ, ປາກເວົ້າຜ່າວໆ, ກືນຍາກ, ປາກແຫ້ງ, ແລະກ້າມເນື້ອອ່ອນເພັຽ. ເດັກນ້ອຽທີ່ຕິດພະຍາດນີ້ ຈະຮູ້ສຶກອ່ອນເພັຽ, ບໍ່ຢາກກິນອາຫານ, ເກີດເປັນທ້ອງຜູກ, ຮ້ອງໃຫ້ບໍ່ອອກສຽງ. ອາການທັງໝົດນີ້ ເກີດມາຈາກກ້ອນເນື້ອລ່ອຽຍ້ອນພິດຂອງສານພິດນັ້ນ. ຖ້າບໍ່ມີການປິ່ນປົວຄົນທີ່ຕິດພະຍາດນີ້ຈະເກີດລ່ອຽທີ່ແຂນ, ຂາ, ລຳຄີງ, ແລະລະບົບກ້າມເນື້ອທີ່ໃຊ້ໃນການຫາຍໃຈ.

ໃນເມື່ອໂຣກ "ໂບຕູລີຊຶມ" ເກີດຂື້ນ ຍ້ອນອາຫານທີ່ມີພະຍາດຕິດມາເມື່ອນັ້ນອາການຕ່າງໆຈະກໍ່ຕົວຂື້ນມາ ພາຍໃນ 18 ຫາ 36 ຊົ່ວໂມງ. ແຕ່ບາງເທື່ອມັນຈະກໍ່ຕົວໄວກວ່ານັ້ນ ຄືພາຍໃນ 6 ຊົ່ວໂມງ ຫລືຊ້າກວ່ານັ້ນ ຄືພາຍໃນ 10 ມື້ຕໍ່ມາ.

## ຕິດພະຍາດ "ໂບຕູລີຊຶມ" ຈາກຜູ້ອື່ນໄດ້ບໍ?

*ບໍ່ໄດ້!* ຄືທີ່ໄດ້ກ່າວມາແລ້ວນັ້ນ ພະຍາດ "ໂບຕູລີຊຶມ" ເປັນສານພິດ. ມັນນີ້ບໍ່ແມ່ນເກີດມາຈາກເຊື້ອໂຣກທີ່ມີຊີວິດ ແລະຈະບໍ່ແຜ່ລະບາດຈາກຜູ້ນຶ່ງ ໄປຫາຜູ້ອື່ນໄດ້.

## "ໂບຕູລີຊຶມ" ປິ່ນປົວຮັກສາເອົາໄດ້ບໍ?

ການປິ່ນປົວຮັກສາໂຣຄ໌ "ໂບຕູລີຊຶມ" ຕ່າງໆນັ້ນເຫຼົ່ານັ້ນສ່ວນໃຫຍ່ຈະອີງໃສ່ການປິ່ນປົວຢ່າງເອົາໃຈໃສ່ຢູ່ໂຮງພະຍາບານ, ຮວມທັງການວິທີຄົ້ນຄວ້າຫາວິທີເພື່ອຈະຊ່ວຍລະບົບຫາຍໃຈຂອງປ່ວຍໄຂ້ເພື່ອໃຫ້ເຂົາຫາຍໃຈໄດ້. ຖ້າຫາກຮູ້ເຖິງສາຍເຫດໄດ້ທັນທີວ່າເປັນຍ້ອນຫຍັງ, ກໍສາມາດສັ່ງຢາປິ່ນປົວໃຫ້ໄດ້ເພື່ອຈະໄດ້ຊ່ວຍຄວບຄຸມສານພິດເພື່ອບໍ່ໃຫ້ມັນຂະຫຍາຍຕົວແຮງຂື້ນ, ແຕ່ວ່າຢານີ້ບໍ່ສາມາດຈະໃຊ້ປິ່ນປົວເດັກທາຣົກໄດ້. ຂັ້ນຕອນຂອງການປິ່ນປົວເດັກທາຣົກກໍຄືການໃຊ້ຢາລ້າງທ້ອງເພື່ອລ້າງສານພິດໃນລະບົບຍ່ອຽອາຫານນັ້ນອອກ. ຖ້າໂຣກ "ໂບຕູລີຊຶມ" ນີ້ເກີດມາຈາກບາດແຜ່ທີ່ຕິດເຊື້ອ, ການປິ່ນປົວກໍອາດຈະແມ່ນທຳການຜ່າຕັດເພື່ອປາດເອົາບໍຣິເວນທີ່ອັກເສບນັ້ນອອກ.

ໃນກໍລະນີທີ່ຮ້າຍແຮງ ການປິ່ນປົວເພື່ອໃຫ້ມີສຸຂພາບກັບຄືນສູ່ປົກກະຕິເດີມນັ້ນເນື່ອງຈາກການຕິດສານພິດ "ໂບຕູລີຊຶມ" ນີ້ ຈະໃຊ້ເວລາດົນຫລາຍອາທິດ ແລະບາງເທື່ອກໍຫລາຍເດືອນ. ຜົນກະທົບກະເທືອນແນວອື່ນອາດຈະມີຄື ການເມື່ອຍອ່ອນເພັຍ ແລະການຫານໃຈບໍ່ເຕັມ ທີ່ອາດຈະຄ້າງຢູ່ຫລາຍປີ.

## ສາມາດປ້ອງກັນສານພິດ "ໂບຕູລີຊຶມ" ໄດ້ບໍ?

ຍັງບໍ່ທັນມີຢາ "ວັກຊີນ" ໃດໆທີ່ຈະເອົາມາຊ່ວຍປ້ອງກັນເພື່ອບໍ່ໃຫ້ຄົນຕິດໂຣກ "ໂບຕູລີຊຶມ" ນີ້ໄດ້. ເຄີຍໃຊ້ຢາ "ວັກຊີນ" ທີ່ໄດ້ທຳການທົດລອງຜະລິດຂື້ນນັ້ນ ໄດ້ທົດລອງໄປສັກໃຫ້ກັບພະນັກງານໃນຫ້ອງທົດລອງແລະກັບທະຫານພົລະເຮືອນ. ໂຣຄ໌ "ໂບຕູລີຊຶມ" ທີ່ເກີດຈາກອາຫານຖືກປະປົນເຊື້ອສານພິດນັ້ນສາມາປ້ອງກັນໄດ້ໂດຍກຳກັບເບິ່ງທີ່ອາຫານຢ່າງລະມັດລະວັງ. ອາຫານໃສ່ກອ່ງໄວ້ໃນເຮືອນເປັນຈຸດນຶ່ງທີ່ຫນ້າຮວ່ງ

MINNESOTA MDH DEPARTMENT OF HEALTH
Communications Office
625 North Robert Street/Box 64975
St. Paul, MN 55164-0975
(651) 201-4989
www.health.state.mn.us

ໃຍເປັນພິເສດ. ເດັກນ້ອຍທີ່ອາຍຸຕ່ຳກວ່າ 12 ເດືອນ ບໍ່ຄວນຈະເອົານ້ຳເຜີ້ງໃຫ້ກິນ, ເພາະວ່າ ນ້ຳເຜີ້ງນັ້ນອາດມີເຊື້ອຂອງ "ໂບຕູລິຊຶມ ແບກທີເຣັຽ" ປະປົນຢູ່ນຳ.

## ເປັນຫຍັງ ຈຶ່ງຄິດວ່າພະຍາດນີ້ອາດຈະເປັນອາວຸດອັນນຶ່ງທີ່ຈະນຳໄປທຳການກໍ່ການຮ້າຍໄດ້?

ຢາພິດທີ່ເກີດມາຈາກ "ໂບຕູລິຊຶມ ແບກທີເຣັຽ" ນັ້ນແຮງທີ່ສຸດ ແລະເປັນອັນຕຣາຍທີ່ສຸດຕໍ່ຊີວິດຂອງຄົນ. ຢາພິດນັ້ນຜະລິດຂຶ້ນມາໄດ້ງ່າຍແລະອີກທັງຍົກຍ້າຍໄປມາໄດ້ງ່າຍ. ຜູ້ທີ່ຕິດພະຍາດນີ້ຕ້ອງໄດ້ຮັບການປິ່ນປົວເປັນເວລາຍາວນານ ແລະເອົາໃຈໃສ່. ຖ້າພະຍາດນີ້ລະບາດຂຶ້ນແຮງ ມັນກໍຈະທຳໃຫ້ລະບົບການດຳຣົງຊີວິດກິຈະກັມປະຈຳວັນຂອງຄົນເຮົາຢຸດຊະງັກລົງໄປ.

ການພະຍາຍາມໄຊ້ "ໂບຕູລິຊຶມ" ເປັນອາວຸດນັ້ນມີມາແຕ່ດົນແລ້ວນັບແຕ່ສມັຍສົງຄາມໂລກຄັ້ງທີສອງເປັນຕົ້ນມາ. ນັບແຕ່ປີ 1970 ມີ ຫລາຍປະເທດສາມາດຜະລິດສານພິດໄດ້, ຫລືຄິດວ່າມີຄວາມສາມາດພໍທີ່ຈະຜະລິດສານພິດນີ້ໄດ້ແລະໄຊ້ມັນເປັນອາວຸດໄດ້. ກຸ່ມສາສນາຍີ່ປຸ່ນກຸ່ມນຶ່ງພະຍາຍາມປ່ອຍສານຢາພິດ "ໂບຕູລິຊຶມ" ໄປຕາມອາກາດຢູ່ຫລາຍແຫ່ງໃນ ເຂດເມືອງໂຕກຽວ, ຢ່າງນ້ອຍສາມຄັ້ງ, ລະຫວ່າງປີ 1990 ແລະ 1995.

## ຈະເຮັດຢ່າງໃດ ຖ້າຂ້ອຍຄິດວ່າຖືກຕິດສານພິດ "ໂບຕູລິຊຶມ"?

ຖ້າທ່ານຮູ້ສຶກມີອາການຂອງສານພິດ "ໂບຕູລິຊຶມ" ແບບໃດແບບນຶ່ງທ່ານຕ້ອງໄປຫາໝໍຜູ້ປະຈຳຕົວ ຂອງທ່ານທັນທີ. ຖ້າທ່ານພົບເຫັນເຫດການທີ່ໜ້າສົງໄສ ຫລືເຫັນການເຄື່ອນໄຫວຂອງ ບຸກຄົນທີ່ຢູ່ໃນເຂດຄຸ້ມວົງສັງຄົມຂອງທ່ານ, ລວມທັງເຊັ່ນ ຄິດວ່າເຂົາ ອາດຈະມີການຜະລິດສານພິດ "ໂບຕູລິຊຶມ" ຫລື ຢາພິດ "ບາຍໂອໂລຢີ" ແນວອື່ນ. ໃຫ້ແຈ້ງກັບເຈົ້າໜ້າ ຕຳຣວດໃນທ້ອງທີ່ຂອງທ່ານທັນທີ.